ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສະພາແຫ່ງຊາດ ເລກທີ 10 /ສພຊ

# ມະຕິຕົກລົງ
## ຂອງ
## ສະພາແຫ່ງຊາດ ແຫ່ງ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
# ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະໜ້າທີ່ ຂອງສະພາແຫ່ງຊາດ.

ອີງຕາມການສະເໜີຂອງນາຍົກລັດຖະມົນຕີ ສະບັບເລກທີ່ 31/ທສນຍ. ລຂ , ລົງວັນທີ 04/06/2004.

ພາຍຫລັງທີ່ກອງປະຊຸມສະໄໝ ສາມັນເທື່ອທີ່ 6 ຂອງສະພາແຫ່ງຊາດຊຸດທີ່ V ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະເລິກເຊິ່ງກ່ຽວກັບເນື້ອໃນກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນພາຍໃນ ສະບັບປັບປຸງ ໃນວາລະປະຊຸມຕອນເຊົ້າຂອງວັນທີ 22 ຕຸລາ 2004.

## ກອງປະຊຸມໄດ້ຕົກລົງ:

<u>ມາດຕາ 1:</u> ຮັບຮອງເອົາກົດໝາຍວ່າດ້ວຍການສົ່ງເສີມ ການລົງທຶນພາຍໃນ ສະບັບປັບປຸງ ດ້ວຍຄະແນນສຽງ ເປັນເອກະສັນ.

<u>ມາດຕາ 2:</u> ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ນະຄອນຫລວງວຽງຈັນ, ວັນທີ 22 ຕຸລາ 2004

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ເລກທີ 72 /ສປປ

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

## ກ່ຽວກັບການປະກາດໃຊ້ ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນພາຍໃນ ສະບັບປັບປຸງ

---

- ອີງຕາມລັດຖະທຳມະນູນ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ໝວດທີ V ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະກົດໝາຍທີ່ສະພາແຫ່ງຊາດ ໄດ້ຕົກລົງ ຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ສະບັບເລກທີ 10 /ສພຊ, ລົງວັນທີ 22 ຕຸລາ 2004 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນພາຍໃນ ສະບັບປັບປຸງ;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 26/ ຄປຈ, ລົງວັນທີ 10 ພະຈິກ 2004

**ປະທານປະເທດ**

**ສາທາລະນະລັດປະຊາທິປະໄຕປະຊາຊົນລາວອອກລັດຖະດຳລັດ:**

**<u>ມາດຕາ 1:</u>** ປະກາດໃຊ້ກົດໝາຍ ວ່າດ້ວຍ ການສົ່ງເສີມການລົງທຶນພາຍໃນ ສະບັບ ປັບ ປຸງ.

**<u>ມາດຕາ 2:</u>** ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ

ນະຄອນຫລວງວຽງຈັນ, ວັນທີ 15 ພະຈິກ 2004

ປະທານປະເທດແຫ່ງ ສປປລາວ

ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------------------

ສະພາແຫ່ງຊາດ ເລກທີ 10 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 22 ຕຸລາ 2004

# ກົດໝາຍ
# ວ່າດ້ວຍການສົ່ງເສີມການລົງທຶນພາຍໃນ

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ຢູ່ ສປປ ລາວ ແມ່ນກຳນົດຫລັກການ, ລະບຽບການ ແລະມາດຕະການ ກ່ຽວກັບການສົ່ງເສີມ, ປົກປ້ອງ ແລະ ຄຸ້ມຄອງການລົງທຶນພາຍໃນ ແນໃສ່ປຸກລະດົມທຸກພາກສ່ວນເສດຖະກິດ, ການນຳໃຊ້ແຫລ່ງທຶນ, ຊັບພະຍາກອນ, ແຮງງານ, ສະຕິປັນຍາ ທີ່ບົ່ມຊ້ອນຢູ່ພາຍໃນປະເທດ ເພື່ອຂະຫຍາຍກຳລັງການຜະລິດຢ່າງມີປະສິດທິຜົນ, ຮັບໃຊ້ການຫັນເປັນອຸດສາຫະກຳ ແລະການຫັນເປັນທັນສະໄໝເທື່ອລະກ້າວ, ປະກອບສ່ວນເຂົ້າໃນການແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ ແລະສ້າງສາພັດທະນາປະເທດຊາດ ໃຫ້ຮັ່ງມີເຂັ້ມແຂງ.

**ມາດຕາ 2. ການລົງທຶນພາຍໃນ**

ການລົງທຶນພາຍໃນ ແມ່ນການນຳເອົາທຶນຮອນເຊັ່ນ: ຊັບສິນ,ເຕັກໂນໂລຢີ ແລະບົດຮຽນ ເຂົ້າໃນການຜະລິດ, ທຸລະກິດຢູ່ພາຍໃນປະເທດ ໂດຍພົນລະເມືອງລາວ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດທີ່ດຳລົງຊີວິດຢູ່ ສປປ ລາວ ຢ່າງຖາວອນ ລວມທັງຄົນລາວທີ່ອາໄສຢູ່ຕ່າງປະເທດ.

**ມາດຕາ 3. ການສົ່ງເສີມການລົງທຶນພາຍໃນ**

ຜູ້ລົງທຶນພາຍໃນສາມາດລົງທຶນໃສ່ການຜະລິດ, ທຸລະກິດໄດ້ໃນທຸກຂະແໜງການ ແລະທຸກເຂດການລົງທຶນຂອງ ສປປລາວ ເວັ້ນເສຍແຕ່ໃນບັນດາກິດຈະການ ທີ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ມີຜົນສະທ້ອນອັນຮ້າຍແຮງຕໍ່ສິ່ງແວດລ້ອມໃນປັດຈຸບັນ ຫລື ຍາວນານ, ຕໍ່ສຸຂະພາບ ຫລື ວັດທະນະທຳອັນດີງາມຂອງຊາດ.

ລັດສົ່ງເສີມໃຫ້ຜູ້ລົງທຶນພາຍໃນ ລົງທຶນໃສ່ກິດຈະການຂອງຂະແໜງການ, ເຂດການລົງທຶນ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 9 ແລະ 10 ຂອງກົດໝາຍສະບັບນີ້ ດ້ວຍການວາງນະໂຍບາຍດ້ານພາສີ, ອາກອນ, ລະບຽບການ, ມາດຕະການ, ການສະໜອງຂໍ້ມູນຂ່າວສານ, ການບໍລິການ ແລະຄວາມສະດວກອື່ນໆ ແກ່ນັກລົງທຶນພາຍ ໃນ.

**ມາດຕາ 4. ວິທີການລົງທຶນພາຍໃນ**

ຜູ້ລົງທຶນພາຍໃນ ສາມາດລົງທຶນໄດ້ໃນທຸກປະເພດ, ຮູບການ ແລະຮູບແບບຂອງວິສາຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທຸລະກິດ.

ໃນຕະຫລອດໄລຍະດຳເນີນທຸລະກິດຂອງວິສາຫະກິດລົງທຶນພາຍໃນນັ້ນ ຊັບສິນຂອງວິສາຫະກິດ ແມ່ນບໍ່ໃຫ້ຫລຸດທຶນຈົດທະບຽນ.

**ມາດຕາ 5. ການປົກປ້ອງການລົງທຶນພາຍໃນ**

ຊັບສິນ ແລະການລົງທຶນ ຂອງຜູ້ລົງທຶນພາຍໃນຈະຖືກປົກປ້ອງຢ່າງເຕັມສ່ວນດ້ວຍລະບຽບກົດໝາຍຂອງ ສປປ ລາວ ໂດຍຈະບໍ່ຖືກເກັບເກນ, ບໍ່ຖືກຍຶດ ຫລື ໂອນເປັນຂອງລັດ ເວັ້ນເສຍແຕ່ຫາກມີຄວາມຈຳເປັນນຳໃຊ້ເພື່ອສາທາລະນະປະໂຫຍດ ຊຶ່ງຜູ້ລົງທຶນຈະໄດ້ຮັບຄ່າທົດແທນຄືນ ຕາມລະບຽບກົດໝາຍ.

## ໝວດທີ II
## ສິດ, ຜົນປະໂຫຍດ ແລະ ພັນທະຂອງຜູ້ລົງທຶນພາຍໃນ

**ມາດຕາ 6. ສິດ, ຜົນປະໂຫຍດຂອງຜູ້ລົງທຶນພາຍໃນ**

ຜູ້ລົງທຶນພາຍໃນ ມີສິດ ແລະ ຜົນປະໂຫຍດດັ່ງຕໍ່ໄປນີ້:

1. ໄດ້ຮັບຄວາມສະດວກຈາກລັດ ໃນການສ້າງຕັ້ງ ແລະ ເຄື່ອນໄຫວການຜະລິດ, ທຸລະກິດ ຢູ່ພາຍໃນ ແລະຕ່າງປະເທດ ຕາມລະບຽບກົດໝາຍ;
2. ໄດ້ຮັບການປົກປ້ອງສິດ ແລະຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການດຳເນີນທຸລະກິດຂອງຕົນ;
3. ເປັນເຈົ້າກຳມະສິດຕໍ່ຊັບສິນ ເຊັ່ນ: ສິດຄຸ້ມຄອງ, ນຳໃຊ້, ໂອນ, ສືບທອດ ແລະ ຜົນປະໂຫຍດ ທີ່ໄດ້ຮັບຈາກການລົງທຶນຂອງຕົນ;
4. ໄດ້ຮັບຄວາມສະດວກ ໃນການສະໜອງສິນເຊື່ອຈາກສະຖາບັນການເງິນຕ່າງໆຕາມລະບຽບການ;

5. ໄດ້ຮັບການຊ່ວຍເຫລືອ ຫລື ການແນະນຳຈາກລັດ ທາງດ້ານວິຊາການ, ເຕັກໂນໂລຢີ ແລະ ຂໍ້ມູນຂ່າວສານ ກ່ຽວກັບການດຳເນີນການຜະລິດ, ທຸລະກິດ;
6. ໄດ້ຮັບການສົ່ງເສີມ, ຊຸກຍູ້ຈາກລັດ ທາງດ້ານການຕະຫລາດ ລວມທັງດ້ານລາຄາສິນຄ້າ ຈາກການຜະລິດຂອງຕົນ;
7. ສຳລັບຜູ້ລົງທຶນພາຍໃນ ທີ່ມີພູມລຳເນົາຢູ່ຕ່າງປະເທດ, ພາຍຫຼັງທີ່ໄດ້ປະຕິບັດພັນທະທາງດ້ານພາສີ, ອາກອນ ແລະຄ່າທຳນຽມຕ່າງໆແລ້ວ ສາມາດສົ່ງຜົນກຳໄລ ແລະທຶນຮອນ ໃນການດຳເນີນທຸລະກິດ ແລະລາຍຮັບອື່ນໆ ທີ່ຖືກຕ້ອງຕາມກົດໝາຍກັບຄືນພູມລຳເນົາຂອງຕົນ ຫລື ໄປປະເທດທີ່ສາມ ໂດຍຜ່ານທະນາຄານທຸລະກິດທີ່ຕັ້ງ ຢູ່ ສປປ ລາວ ຕາມອັດຕາແລກປ່ຽນຂອງທະນາຄານໃນວັນນັ້ນ;
8. ຜູ້ລົງທຶນພາຍໃນ ແລະສະມາຊິກຄອບຄົວ ລວມທັງນັກວິຊາການ, ພະນັກງານ ທີ່ເປັນແຮງງານຕ່າງປະເທດຂອງວິສາຫະກິດລົງທຶນພາຍໃນ ຈະໄດ້ຮັບຄວາມສະດວກໃນການຂໍວີຊາເຂົ້າ-ອອກຫລາຍເທື່ອ ແລະອາໃສຢູ່ດິນແດນຂອງ ສປປ ລາວ ໃນໄລຍະຍາວ ຕາມການຕົກລົງຂອງລັດຖະບານ;
9. ໄດ້ຮັບການປົກປ້ອງຊັບສິນທາງປັນຍາ ທີ່ຈົດທະບຽນນຳຂະແໜງການທີ່ກ່ຽວຂ້ອງຂອງ ສປປ ລາວ;
10. ຮ້ອງຂໍຄວາມເປັນທຳ, ຮ້ອງຟ້ອງ ຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນຖືກອັບປະໂຫຍດໃນການດຳເນີນທຸລະກິດ.

**ມາດຕາ 7. ພັນທະຂອງຜູ້ລົງທຶນພາຍໃນ**

ພັນທະຂອງຜູ້ລົງທຶນພາຍໃນ ມີດັ່ງຕໍ່ໄປນີ້:

1. ດຳເນີນການຜະລິດ, ທຸລະກິດຕາມໃບອະນຸຍາດ, ຕາມຂັ້ນຕອນຂອງບົດວິພາກເສດຖະກິດ-ເຕັກນິກ ຫລືແຜນການດຳເນີນທຸລະກິດ, ຕາມສັນຍາ ແລະລະບຽບກົດໝາຍ;
2. ໃນການດຳເນີນທຸລະກິດຂອງຕົນ ວິສາຫະກິດລົງທຶນພາຍໃນຕ້ອງຖືບັນຊີ ຕາມກົດໝາຍວ່າດ້ວຍບັນຊີວິສາຫະກິດ ແລະຕ້ອງລາຍງານບົດສະຫລຸບບັນຊີປະຈຳປີຂອງຕົນ ໃຫ້ຂະແໜງການທີ່ກ່ຽວຂ້ອງ. ບົດສະຫລຸບບັນຊີດັ່ງກ່າວນັ້ນຕ້ອງຜ່ານການຢັ້ງຢືນຈາກອົງການກວດສອບບັນຊີຂອງລັດ ຫລື ບໍລິສັດກວດສອບບັນຊີເອກະລາດ ທີ່ສ້າງຕັ້ງຂຶ້ນໃນ ສປປ ລາວ ຕາມລະບຽບການ;
3. ລາຍງານການເຄື່ອນໄຫວການຜະລິດ, ທຸລະກິດຂອງຕົນຕໍ່ ຄລທ ແລະຂະແໜງການທີ່ກ່ຽວຂ້ອງ ຕາມກຳນົດເວລາທີ່ລັດວາງອອກ;

4. ປະຕິບັດພັນທະພາສີ, ອາກອນ ແລະຄ່າທຳນຽມອື່ນໆ ກ່ຽວກັບການດຳເນີນທຸລະກິດຂອງຕົນ ຢ່າງຄົບຖ້ວນ ແລະທັນເວລາ;
5. ອຳນວຍຄວາມສະດວກ ໃຫ້ແກ່ການຈັດຕັ້ງ ແລະການເຄື່ອນໄຫວຂອງອົງການຈັດຕັ້ງພັກ ແລະອົງການຈັດຕັ້ງມະຫາຊົນ ໃນວິສາຫະກິດຂອງຕົນ;
6. ເອົາໃຈໃສ່ດ້ານສະຫວັດດີການ, ສຸຂະພາບ ແລະຄວາມປອດໄພຂອງຜູ້ອອກແຮງງານ ໃນວິສາຫະກິດຂອງຕົນ;
7. ປົກປັກຮັກສາສິ່ງແວດລ້ອມ, ຮັບປະກັນບໍ່ໃຫ້ການດຳເນີນທຸລະກິດ ມີຜົນກະທົບອັນຮ້າຍແຮງຕໍ່ສາທາລະນະຊົນ, ຕໍ່ຄວາມປອດໄພຂອງຊາດ ຫລືຄວາມສະຫງົບຂອງສັງຄົມ;
8. ສ້າງຄັງສະສົມ ຕາມລະບຽບກົດໝາຍ;
9. ໃຫ້ມີການປະກັນໄພ ແລະ ປະກັນສັງຄົມ ຕາມລະບຽບກົດໝາຍ;
10. ກໍລະນີທີ່ມີການຍົກຍ້າຍທີ່ຕັ້ງຂອງວິສາຫະກິດ ຕ້ອງແຈ້ງໃຫ້ຂະແໜງການຄຸ້ມຄອງທີ່ກ່ຽວຂ້ອງຊາບ, ພ້ອມກັນນັ້ນ ກໍຕ້ອງບູລະນະສະຖານທີ່ໃຫ້ຢູ່ໃນສະພາບປົກກະຕິ;
11. ປະຕິບັດພັນທະອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ III
## ນະໂຍບາຍສົ່ງເສີມການລົງທຶນ

### ມາດຕາ 8. ການໃຫ້ນະໂຍບາຍສົ່ງເສີມ

ລັດພິຈາລະນາໃຫ້ນະໂຍບາຍສົ່ງເສີມການລົງທຶນພາຍໃນ ໂດຍອີງໃສ່ກິດຈະການຂອງຂະແໜງການ ແລະເຂດ ສົ່ງເສີມການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ແລະ10 ຂອງກົດໝາຍສະບັບນີ້;

### ມາດຕາ 9. ກິດຈະການຂອງຂະແໜງການທີ່ໄດ້ຮັບການສົ່ງເສີມ

ລັດຖະບານ ກຳນົດກິດຈະການໃນຂະແໜງການ ທີ່ໄດ້ຮັບການສົ່ງເສີມຕາມລາຍລະອຽດດັ່ງລຸ່ມນີ້:

1. ກິດຈະການ ການຜະລິດສິນຄ້າເພື່ອສົ່ງອອກ ແລະ ທົດແທນການນຳເຂົ້າ;
2. ກິດຈະການ ກະສິກຳ-ປ່າໄມ້, ປຸງແຕ່ງຜະລິດຕະພັນກະສິກຳ-ປ່າໄມ້ ແລະຫັດຖະກຳ;
3. ກິດຈະການ ອຸດສາຫະກຳປຸງແຕ່ງ, ອຸດສາຫະກຳ ທີ່ນຳໃຊ້ເຕັກນິກ, ເຕັກໂນໂລຢີທັນສະໄໝ, ກິດຈະການຄົ້ນຄ້ວາວິໄຈວິທະຍາສາດ ແລະການພັດທະນາ, ກິດຈະການປົກປັກຮັກສາສິ່ງແວດລ້ອມ ແລະ ຊີວະນາໆພັນ;

4. ກິດຈະການ ກ່ຽວກັບການພັດທະນາທາງດ້ານ ຊັບພະຍາກອນມະນຸດ, ສີມືແຮງງານ ແລະ ການປົກປັກຮັກສາສຸຂະພາບຂອງພົນລະເມືອງ;
5. ກິດຈະການກໍ່ສ້າງພື້ນຖານໂຄງລ່າງ;
6. ກິດຈະການຜະລິດວັດສະດຸກໍ່ສ້າງ;
7. ກິດຈະການຜະລິດວັດຖຸດິບ, ອຸປະກອນ ເພື່ອສະໜອງໃຫ້ແກ່ການຜະລິດອຸດສາຫະກໍາທີ່ສໍາຄັນ;
8. ກິດຈະການ ພັດທະນາອຸດສາຫະກໍາທ່ອງທ່ຽວ ແລະ ການບໍລິການທາງຜ່ານ.

**ມາດຕາ 10. ເຂດທີ່ໄດ້ຮັບການສົ່ງເສີມ**

ລັດຖະບານ ກໍານົດເຂດສົ່ງເສີມການລົງທຶນ ໂດຍອີງໃສ່ທີ່ຕັ້ງທາງດ້ານພູມສາດ, ສະພາບເສດຖະກິດ-ສັງຄົມຂອງເຂດ ໂດຍແບ່ງ ເປັນ 3 ເຂດຄື:

- ເຂດ1: ເຂດພູດອຍ, ພູພຽງ, ທົ່ງພຽງ, ທີ່ບໍ່ທັນມີພື້ນຖານໂຄງລ່າງເສດຖະກິດທີ່ເອື້ອ ອໍານວຍແກ່ການລົງທຶນ.
- ເຂດ 2: ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງເສດຖະກິດສາມາດຮອງຮັບການລົງທຶນໄດ້ສ່ວນໃດສ່ວນໜຶ່ງແລ້ວ.
- ເຂດ 3: ເຂດພູດອຍ, ພູພຽງ, ທົ່ງພຽງ ທີ່ມີພື້ນຖານໂຄງລ່າງຮອງຮັບການລົງທຶນໄດ້ດີແລ້ວ.

ສ່ວນລາຍລະອຽດຂອງການແບ່ງເຂດການສົ່ງເສີມການລົງທຶນນັ້ນ ລັດຖະບານເປັນຜູ້ຕົກລົງ.

**ມາດຕາ 11. ນະໂຍບາຍດ້ານພາສີ, ອາກອນ**

ວິສາຫະກິດລົງທຶນພາຍໃນ ທີ່ລົງທຶນຕາມ ກິດຈະການຂອງຂະແໜງການ ແລະ ເຂດການລົງທຶນ ທີ່ໄດ້ກໍານົດໄວ້ໃນ ມາດຕາ 9 ແລະ ມາດຕາ 10 ຂອງກົດໝາຍສະບັບນີ້ ຈະໄດ້ຮັບນະໂຍບາຍທາງດ້ານພາສີ, ອາກອນ ດັ່ງນີ້:

- ຖ້າລົງທຶນໃນເຂດ 1 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ ເປັນໄລຍະເວລາ 7 ປີ ແລະຫລັງຈາກນັ້ນ ຈະໄດ້ເສຍອາກອນກໍາໄລ ໃນອັດຕາ ສິບສ່ວນຮ້ອຍ( 10%);

- ຖ້າລົງທຶນໃນເຂດ 2 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ ເປັນໄລຍະເວລາ 5 ປີ, ຫລັງຈາກນັ້ນ ຈະໄດ້ເສຍອາກອນກໍາໄລໃນອັດຕາຫລຸດຜ່ອນເຄິ່ງໜຶ່ງ ຂອງສິບຫ້າສ່ວນຮ້ອຍ (15%) ໃນໄລຍະເວລາ 3 ປີ ແລະຕໍ່ໄປຈະໄດ້ເສຍອາກອນກໍາໄລໃນອັດຕາເຕັມສິບຫ້າສ່ວນຮ້ອຍ (15%);

- ຖ້າລົງທຶນໃນເຂດ 3 ຈະໄດ້ຮັບການຍົກເວັ້ນອາກອນກໍາໄລ ເປັນໄລຍະເວລາ 2 ປີ, ຫລັງຈາກນັ້ນຈະໄດ້ເສຍອາກອນກໍາໄລ ໃນອັດຕາຫລຸດຜ່ອນເຄິ່ງໜຶ່ງຂອງຊາວສ່ວນຮ້ອຍ (20%) ໃນໄລຍະເວລາ 2 ປີ ແລະຕໍ່ໄປຈະໄດ້ເສຍອາກອນກໍາໄລເຕັມ ໃນອັດຕາຊາວສ່ວນຮ້ອຍ (20%).

ໄລຍະຍົກເວັ້ນອາກອນກໍາໄລ ໃຫ້ນັບແຕ່ວັນທີ່ວິສາຫະກິດລົງທຶນພາຍໃນດໍາເນີນທຸລະກິດເປັນຕົ້ນໄປ. ສໍາລັບບາງກິດຈະການປູກໄມ້ນັ້ນ ໄລຍະຍົກເວັ້ນອາກອນກໍາໄລໃຫ້ ນັບແຕ່ວັນທີ່ວິສາຫະກິດມີກໍາໄລເປັນຕົ້ນໄປ.

ເມື່ອໝົດໄລຍະການຍົກເວັ້ນອາກອນກໍາໄລແລ້ວ ວິສາຫະກິດລົງທຶນພາຍໃນຕ້ອງເສຍອາກອນກໍາໄລຕາມລະບຽບກົດໝາຍ.

ນອກຈາກນະໂຍບາຍສົ່ງເສີມທີ່ໄດ້ກ່າວມາຂ້າງເທິງນັ້ນແລ້ວ ວິສາຫະກິດລົງທຶນພາຍໃນ ຍັງຈະໄດ້ຮັບນະໂຍບາຍເພີ້ມເຕີມ ດັ່ງລຸ່ມນີ້:

1. ໃນໄລຍະຍົກເວັ້ນ ຫລື ຫລຸດຜ່ອນອາກອນກໍາໄລນັ້ນ ຈະໄດ້ຮັບການຍົກເວັ້ນອາກອນຕໍ່າສຸດ;
2. ກໍາໄລທີ່ນໍາໄປຂະຫຍາຍຕໍ່ໃນກິດຈະການຂອງຕົນ ທີ່ໄດ້ຮັບອະນຸຍາດໄປແລ້ວນັ້ນ ຈະຖືກຍົກເວັ້ນອາກອນກໍາໄລໃນປີການບັນຊີ;
3. ໄດ້ຮັບນະໂຍບາຍຍົກເວັ້ນພາສີນໍາເຂົ້າ ແລະອາກອນທີ່ເກັບຈາກການນໍາເຂົ້າຕໍ່ອຸປະກອນ, ເຄື່ອງອາໄຫລ່, ພາຫະນະການຜະລິດໂດຍກົງ, ວັດຖຸດິບທີ່ບໍ່ມີຢູ່ພາຍໃນປະເທດ ຫລືມີແຕ່ຫາກບໍ່ພຽງພໍ, ຜະລິດຕະພັນເຄິ່ງສໍາເລັດຮູບທີ່ນໍາເຂົ້າມາ ເພື່ອທໍາການປຸງແຕ່ງ ຫລືປະກອບເປັນຜະລິດຕະພັນເພື່ອສົ່ງອອກ;
4. ໄດ້ຮັບນະໂຍບາຍຍົກເວັ້ນພາສີຂາອອກ ສໍາລັບຜະລິດຕະພັນເພື່ອສົ່ງອອກ.

ສ່ວນວັດຖຸດິບ ແລະຜະລິດຕະພັນເຄິ່ງສໍາເລັດຮູບທີ່ນໍາເຂົ້າ ເພື່ອປຸງແຕ່ງ ຫລື ປະກອບເປັນຜະລິດຕະພັນ ເພື່ອທົດແທນສິນຄ້າຂາເຂົ້າ ກໍຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນພາສີ, ອາກອນ ທີ່ເກັບຈາກການນໍາເຂົ້າ.

ສໍາລັບເຂດເສດຖະກິດພິເສດ, ເຂດອຸດສາຫະກໍາ, ເຂດການຄ້າຊາຍແດນ ແລະເຂດເສດຖະກິດສະເພາະອື່ນໆນັ້ນ ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍສະເພາະຂອງແຕ່ລະເຂດ.

## ໝວດທີ IV
## ການຂໍລົງທຶນພາຍໃນ

### ມາດຕາ 12. ການຍື່ນຄໍາຮ້ອງຂໍລົງທຶນພາຍໃນ

ບຸກຄົນ ຫລື ນິຕິບຸກຄົນພາຍໃນ ທີ່ມີຈຸດປະສົງຢາກລົງທຶນ ໃນຂະແໜງເສດຖະກິດ-ສັງຄົມໃດໜຶ່ງ ທີ່ພົວພັນເຖິງສິດສໍາປະທານ ແລະກິດຈະການໃນຂະແໜງການທີ່ລົງທຶນຕາມທີ່ໄດ້ກໍານົດໄວ້ໃນມາດຕາ 9 ແລະມາດຕາ 10 ນັ້ນ ໃຫ້ປະກອບຄໍາຮ້ອງຕາມແບບພິມທີ່ຄະນະກໍາມະການສົ່ງເສີມ ແລະຄຸ້ມຄອງການລົງທຶນ ຊຶ່ງມີຊື່ຫຍໍ້ວ່າ: ”ຄລທ” ວາງອອກ ພ້ອມດ້ວຍເອກະສານຄື: ສໍາເນົາປຶ້ມສໍາມະໂນຄົວ, ຊີວະປະຫວັດ, ບົດວິພາກເສດຖະກິດ-ເຕັກນິກ ຫລືແຜນການດໍາເນີນທຸລະກິດ, ຂໍ້ມູນກ່ຽວກັບທຸລະກິດ

ຖ້າຫາກແມ່ນວິສາຫະກິດ, ສັນຍາຮ່ວມທຶນ ຖ້າຈະລົງທຶນໃນຮູບແບບວິສາຫະກິດຮ່ວມທຶນ ແລ້ວຍື່ນຕໍ່ ຄລທ ເພື່ອພິຈາລະນາ.

ນອກຈາກບັນດາກິດຈະການທີ່ກ່າວມາຂ້າງເທິງນີ້ແລ້ວ ແມ່ນໃຫ້ຍື່ນຄໍາຮ້ອງຕໍ່ ຂະແໜງການຄ້າ.

**ມາດຕາ 13. ການພິຈາລະນາຄໍາຮ້ອງຂໍລົງທຶນ**

ພາຍຫຼັງທີ່ໄດ້ຮັບຄໍາຮ້ອງພ້ອມດ້ວຍເອກະສານປະກອບຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 12 ຂອງກົດໝາຍສະບັບນີ້ແລ້ວ ຄະນະກໍາມະການສົ່ງເສີມ ແລະຄຸ້ມຄອງ ການລົງທຶນພາຍໃນ ແລະຂະແໜງການຄ້າຕ້ອງພິຈາລະນາ ແລະໃຫ້ຄໍາຕອບເປັນ ລາຍລັກອັກສອນ ແກ່ຜູ້ລົງທຶນພາຍ ໃນກໍານົດເວລາດັ່ງຕໍ່ໄປນີ້:

- ສໍາລັບກິດຈະການ ທີ່ພົວພັນກັບການໃຫ້ສິດສໍາປະທານ ຄລທ ຕ້ອງໃຫ້ຄໍາ ຕອບບໍ່ເກີນສາມສິບວັນລັດຖະການ, ສ່ວນກິດຈະການອື່ນນັ້ນ ແມ່ນບໍ່ເກີນ ຊາວວັນລັດ ຖະການ;

- ສໍາລັບກິດຈະການທົ່ວໄປ ຂະແໜງການຄ້າຕ້ອງໃຫ້ຄໍາຕອບບໍ່ເກີນ ຊາວວັນ ລັດຖະການ.

ຜູ້ລົງທຶນພາຍໃນທີ່ຍື່ນຄໍາຮ້ອງຢູ່ ຄລທ ຖ້າມີເງື່ອນໄຂຖືກຕ້ອງຈະໄດ້ຮັບໃບອະ ນຸຍາດລົງທຶນ, ທະບຽນວິສາຫະກິດ ແລະທະບຽນອາກອນ ພ້ອມກັນຢູ່ ຄລທ.

ຜູ້ລົງທຶນພາຍໃນ ທີ່ຍື່ນຄໍາຮ້ອງຢູ່ ຂະແໜງການຄ້າ ທີ່ມີເງື່ອນໄຂຖືກຕ້ອງຈະ ໄດ້ຮັບທະບຽນວິສາຫະກິດ ແລະ ທະບຽນອາກອນ ພ້ອມກັນຢູ່ ຂະແໜງການຄ້າ;

ຈາກນັ້ນຈຶ່ງຖືວ່າເປັນວິສາຫະກິດຖືກຕ້ອງຕາມກົດໝາຍ ແລະພາຍໃນເກົ້າສິບ ວັນ ວິສາຫະກິດລົງທຶນພາຍໃນດັ່ງກ່າວ ຕ້ອງເລີ່ມດໍາເນີນກິດຈະການຂອງຕົນ ຕາມຂັ້ນ ຕອນທີ່ໄດ້ກໍານົດໄວ້ໃນບົດວິພາກເສດຖະກິດ-ເຕັກນິກ ຫລືແຜນການດໍາເນີນທຸລະກິດ ທີ່ຄັດຕິດໃນໃບຂໍອະນຸຍາດລົງທຶນ. ຖ້າບໍ່ປະຕິບັດຕາມກໍານົດເວລາດັ່ງກ່າວໂດຍບໍ່ມີເຫດ ຜົນພຽງພໍແລ້ວ ໃບອະນຸຍາດລົງທຶນ ແລະໃບທະບຽນວິສາຫະກິດ ຈະຖືກພິຈາລະນາຍົກ ເລີກ.

**ມາດຕາ 14. ອາຍຸການຂອງທະບຽນວິສາຫະກິດ**

ທະບຽນວິສາຫະກິດຂອງຜູ້ລົງທຶນພາຍໃນ ແມ່ນບໍ່ມີກໍານົດ ຖ້າຫາກວ່າດໍາເນີນ ໄປເປັນປົກກະຕິ ຍົກເວັ້ນໃນກໍລະນີ ທີ່ສັນຍາຫາກໄດ້ກໍານົດກ່ຽວກັບອາຍຸການຂອງ ການລົງທຶນ ຫລື ຜູ້ລົງທຶນ ຫາກມີຈຸດປະສົງຢາກຢຸດຕິການດໍາເນີນທຸລະກິດເອງ ຫລື ວິສາຫະກິດລົງທຶນນັ້ນ ຫາກພົບຄວາມຫຍຸ້ງຍາກ ຊຶ່ງບໍ່ສາມາດຊໍາລະໜີ້ສິນໄດ້ ໃຫ້ປະຕິ ບັດຕາມກົດໝາຍວ່າດ້ວຍການລົ້ມລະລາຍ ຂອງວິສາຫະກິດ.

## ໝວດທີ V

## ການຄຸ້ມຄອງການລົງທຶນພາຍໃນ

**ມາດຕາ15. ອົງການຄຸ້ມຄອງການລົງທຶນພາຍໃນ**

ອົງການຄຸ້ມຄອງການລົງທຶນພາຍໃນ ປະກອບດ້ວຍ:

- ຄະນະກຳມະການສົ່ງເສີມ ແລະຄຸ້ມຄອງການລົງທຶນ ຂັ້ນສູນກາງ ແລະ ຂັ້ນແຂວງ;
- ຂະແໜງການຄ້າ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 16. ສິດ ແລະໜ້າທີ່ ຂອງ ຄລທ ຂັ້ນສູນກາງ**

ຄະນະກຳມະການສົ່ງເສີມ ແລະຄຸ້ມຄອງການລົງທຶນຂັ້ນສູນກາງ ຊຶ່ງແມ່ນນາຍົກລັດຖະມົນຕີເປັນຜູ້ແຕ່ງຕັ້ງ, ມີສຳນັກງານຕັ້ງຢູ່ ຄະນະກຳມະການແຜນການ ແລະການລົງທຶນ, ມີສິດ ແລະໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາຍຸດທະສາດ, ນະໂຍບາຍການສົ່ງເສີມ ແລະດຶງດູດການລົງທຶນພາຍໃນ ເພື່ອສະເໜີ ໃຫ້ລັດຖະບານພິຈາລະນາຕົກລົງ;
2. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການ ກ່ຽວກັບການປົກປ້ອງ ແລະສົ່ງເສີມການລົງທຶນພາຍໃນ;
3. ສ້າງແຜນການ ແລະສັງລວມບັນຊີໂຄງການລົງທຶນ ທີ່ຕ້ອງການດຶງດູດການລົງ ທຶນພາຍໃນ;
4. ໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ສະໜອງຂໍ້ມູນຂ່າວສານ, ອຳນວຍຄວາມສະດວກໃຫ້ຜູ້ລົງທຶນພາຍໃນ;
5. ພິຈາລະນາອອກ ຫລື ຖອນໃບອະນຸຍາດການລົງທຶນ ພາຍໃນຂອບເຂດສິດ ແລະໜ້າທີ່ຂອງຕົນ ເປັນຕົ້ນແມ່ນໂຄງການທີ່ພົວພັນເຖິງການໃຫ້ສິດສຳປະທານ;
6. ປະສານສົມທົບກັບຂະແໜງການ ແລະທ້ອງຖິ່ນ, ຊີ້ນຳການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ;
7. ຕິດຕາມກວດກາ, ປະເມີນຜົນ ແລະລາຍງານໃຫ້ລັດຖະບານ ກ່ຽວກັບການດຳເນີນທຸລະກິດຂອງວິສາຫະກິດລົງທຶນພາຍໃນ;
8. ເປັນໃຈກາງປະສານງານໃນການຊຸກຍູ້, ສົ່ງເສີມ ແລະແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນ ໃນການດຳເນີນທຸລະກິດຂອງວິສາຫະກິດລົງທຶນພາຍໃນ;
9. ຈັດກອງປະຊຸມປະຈຳປີ ຂອງ ຄລທ ແລະກອງປະຊຸມປຶກສາຫາລືກັບຜູ້ລົງທຶນພາຍໃນ;
10. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 17. ສິດ ແລະໜ້າທີ່ຂອງ ຄລທ ຂັ້ນແຂວງ**

ຄະນະກຳມະການສົ່ງເສີມ ແລະຄຸ້ມຄອງການລົງທຶນຂັ້ນແຂວງ ຊຶ່ງແມ່ນປະທານ ຄລທ ຂັ້ນສູນກາງ ເປັນຜູ້ແຕ່ງຕັ້ງນັ້ນ ເປັນເສນາທິການໃຫ້ແກ່ ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ຫລືຫົວໜ້າເຂດພິເສດ ແລະ ຄລທ ຂັ້ນສູນກາງໃນການສົ່ງເສີມ ແລະຄຸ້ມຄອງການລົງທຶນພາຍໃນ, ມີສຳນັກງານຕັ້ງຢູ່ພະແນກແຜນການ ແລະການລົງທຶນຂັ້ນແຂວງ, ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຈັດຕັ້ງປະຕິບັດແຜນຍຸດທະສາດ, ນະໂຍບາຍການສົ່ງເສີມ ແລະ ດຶງດູດການລົງທຶນພາຍໃນ ຢູ່ທ້ອງຖິ່ນຂອງຕົນ;
2. ໂຄສະນາເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍ, ສະໜອງຂໍ້ມູນ ຂ່າວສານ, ອຳນວຍຄວາມສະດວກໃຫ້ຜູ້ລົງທຶນພາຍໃນ;
3. ພິຈາລະນາການອອກ ຫລືການຖອນໃບອະນຸຍາດລົງທຶນ ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ;
4. ປະສານສົມທົບກັບພາກສ່ວນຕ່າງໆທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມຕ່າງໆໃນໂຄງການທີ່ຕົນໄດ້ອະນຸມັດ ແລະໃນການຈັດຕັ້ງປະຕິບັດຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະແຈ້ງການ ຂອງຂັ້ນເທິງ;
5. ຕິດຕາມກວດກາ, ປະເມີນຜົນ ແລະລາຍງານ ເຈົ້າແຂວງ, ເຈົ້າຄອງນະຄອນຫລວງ ຫລືຫົວໜ້າເຂດພິເສດ ແລະ ຄລທ ຂັ້ນສູນກາງ ກ່ຽວກັບການລົງທຶນພາຍໃນທ້ອງຖິ່ນຂອງຕົນ;
7. ເປັນໃຈກາງປະສານງານ ໃນການແກ້ໄຂບັນຫາຕ່າງໆທີ່ເກີດຂຶ້ນກ່ຽວກັບການລົງທຶນພາຍໃນ;
8. ຈັດກອງປະຊຸມປະຈຳປີ ຂອງ ຄລທ ຂັ້ນແຂວງ ແລະກອງປະຊຸມປຶກສາຫາລືກັບຜູ້ລົງທຶນ;
9. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 18. ສິດ ແລະ ໜ້າທີ່ຂອງຂະແໜງການ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ**

ບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະພາກສ່ວນອື່ນໆທີ່ກ່ຽວຂ້ອງ ຕ້ອງດຳເນີນການສົ່ງເສີມ ແລະຄຸ້ມຄອງການລົງທຶນຕາມສິດ ແລະໜ້າທີ່ຂອງຕົນດັ່ງຕໍ່ໄປນີ້:

1. ປະສານສົມທົບກັບ ຄລທ ຫລືຂະແໜງການຄ້າ ຂັ້ນສູນກາງໃນການສ້າງລະບຽບກົດໝາຍ, ນະໂຍບາຍ ແລະ ແຜນການກ່ຽວກັບການລົງທຶນພາຍໃນ;
2. ສ້າງແຜນການ ແລະບັນຊີໂຄງການລົງທຶນ ທີ່ຕ້ອງການດຶງດູດການລົງທຶນໃນຂະແໜງການຂອງຕົນ, ຈັດຕັ້ງການໂຄສະນາ, ສະໜອງຂໍ້ມູນຂ່າວສານ, ຂົນຂວາຍ ແລະສົ່ງເສີມການລົງທຶນ;
3. ເຂົ້າຮ່ວມພິຈາລະນາຕົກລົງໂຄງການການລົງທຶນ;

4. ຊີ້ນຳຂະແໜງການຂອງຕົນທັງຢູ່ສູນກາງ ແລະທ້ອງຖິ່ນໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນ ແລະແກ້ໄຂບັນຫາທີ່ເກີດຂຶ້ນໃນຂັ້ນຕອນຕ່າງໆກ່ຽວກັບການຈັດຕັ້ງປະຕິບັດໂຄງການລົງທຶນ;
5. ກວດກາ, ກວດການ ແລະປະເມີນຜົນກິດຈະການຂອງວິສາຫະກິດລົງທຶນພາຍໃນ ຕາມຂອບເຂດສິດ ແລະໜ້າທີ່ຂອງຕົນ;
6. ປະຕິບັດສິດ ແລະໜ້າທີ່ອື່ນໆ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ສຳລັບອົງການປົກຄອງ ແລະຂະແໜງການຂັ້ນທ້ອງຖິ່ນທີ່ກ່າວມາເທິງນີ້ ກໍໃຫ້ປະສານສົມທົບກັບ ຄລທ ແລະຂະແໜງການຄ້າຂັ້ນທ້ອງຖິ່ນ ຕາມສິດ ແລະໜ້າທີ່ທີ່ໄດ້ກຳນົດໄວ້ໃນມາດຕານີ້ .

## ໝວດທີ VI
## ການແກ້ໄຂຂໍ້ຂັດແຍ່ງ

### ມາດຕາ 19. ຫລັກການລວມ

ໃນການດຳເນີນທຸລະກິດ ຖ້າຫາກມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີຕ້ອງປະຕິບັດຫລັກການແກ້ໄຂດ້ວຍການປະນີປະນອມນຳກັນ, ໄກ່ເກ່ຍ ຫລື ຮ້ອງຟ້ອງ.

### ມາດຕາ 20. ການໄກ່ເກ່ຍຂໍ້ຂັດແຍ່ງ

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດຳເນີນທຸລະກິດຊຶ່ງຄູ່ກໍລະນີບໍ່ສາມາດແກ້ໄຂໄດ້ດ້ວຍຮູບການປານີປານອມນຳກັນນັ້ນ ໃຫ້ສະເໜີຕໍ່ ຄລທ ຫລື ຂະແໜງການຄ້າ ບ່ອນທີ່ຕົນໄດ້ຮັບອະນຸຍາດນັ້ນ ເປັນຜູ້ໄກ່ເກ່ຍ.

ໃນກໍລະນີທີ່ ຄລທ ຫລືຂະແໜງການຄ້າບໍ່ສາມາດໄກ່ເກ່ຍໄດ້ນັ້ນ ກໍໃຫ້ສະເໜີຕໍ່ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແກ້ໄຂ.

### ມາດຕາ 21. ການຮ້ອງຟ້ອງ

ຂໍ້ຂັດແຍ່ງທີ່ເກີດຂຶ້ນໃນການດຳເນີນທຸລະກິດຊຶ່ງບໍ່ສາມາດຕົກລົງກັນໄດ້ ດ້ວຍການໄກ່ເກ່ຍ, ຄູ່ກໍລະນີກໍສາມາດຮ້ອງຟ້ອງໄປຍັງສານປະຊາຊົນ ເພື່ອດຳເນີນການແກ້ໄຂ ຕາມຂະບວນການຍຸຕິທຳ.

## ໝວດທີ VII
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

### ມາດຕາ 22. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງ ຫາກມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ແລະໄດ້ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງຊາດຈະໄດ້ຮັບການຍ້ອງຍໍຊົມເຊີຍ ຕາມຄວາມເໝາະສົມ.

**ມາດຕາ 23. ມາດຕະການຕໍ່ຜູ້ລົງທຶນທີ່ລະເມີດ**

ບຸກຄົນ ຫລື ນິຕິບຸກຄົນ ຫາກລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ດ້ວຍການກ່າວເຕືອນ, ໂຈະ, ຖອນໃບອະນຸຍາດລົງທຶນ ແລະທະບຽນວິສາຫະກິດທີ່ໄດ້ຮັບໄປແລ້ວນັ້ນ ຫລື ມອບໃຫ້ສານພິຈາລະນາ.

**ມາດຕາ 24. ມາດຕະການຕໍ່ບຸກຄົນອື່ນທີ່ລະເມີດ**

ບຸກຄົນ ທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບການລົງທຶນເຊັ່ນ: ສວຍໃຊ້ຖານະຕໍາແໜ່ງ ເພື່ອກົດໜ່ວງ ຫລື ຂັດຂວາງ ການສົ່ງເສີມ, ການອະນຸຍາດລົງທຶນ, ປອມແປງເອກະສານ, ຕົວະຍົວະຫລອກລວງ ຜູ້ລົງທຶນ, ຮັບສິນບົນ ຫລື ມີການກະທໍາອື່ນໆທີ່ສ້າງຄວາມເສຍຫາຍໃຫ້ແກ່ລັດ ຫລື ຜູ້ລົງທຶນ ຈະໄດ້ໃຊ້ແທນຄ່າເສຍຫາຍທີ່ເກີດຂຶ້ນ, ຈະຖືກປະຕິບັດວິໄນ ຫລື ປະຕິບັດມາດຕະການອື່ນໆ ຕາມກົດໝາຍຂອງ ສປປ ລາວ.

## ໝວດທີ VIII
## ບົດບັນຍັດສຸດທ້າຍ

**ມາດຕາ 25. ການຈັດຕັ້ງປະຕິບັດກົດໝາຍ**

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 26. ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫລັງ ຫົກສິບວັນ ນັບແຕ່ວັນທີ່ປະທານປະເທດແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດໍາລັດປະກາດໃຊ້ເປັນຕົ້ນໄປ. ຫລັງຈາກນັ້ນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ສະບັບເລກທີ 03/95/ສພຊ, ລົງວັນທີ 14 ຕຸລາ 1995 ຈະໝົດຜົນນໍາໃຊ້ ໂດຍບໍ່ແຕະຕ້ອງເຖິງບັນດາສິດ, ຜົນປະໂຫຍດ ແລະພັນທະ ຊຶ່ງຜູ້ລົງທຶນພາຍໃນໄດ້ຮັບ ຫລື ຕ້ອງປະຕິບັດຕາມພາຍໃຕ້ກົດໝາຍສະບັບເລກທີ 03/95/ ສພຊ ດັ່ງກ່າວນັ້ນ. ຖ້າວ່າຜູ້ລົງທຶນພາຍໃນ ທີ່ໄດ້ຮັບອະນຸຍາດໃຫ້ລົງທຶນພາຍໃຕ້ກົດໝາຍສະບັບເລກທີ 03/ 95/ ສພຊ ຫາກມີຈຸດປະສົງຢາກໄດ້ຮັບນະໂຍບາຍສົ່ງເສີມ ຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນສະບັບປັບປຸງນີ້ ຜູ້ກ່ຽວຕ້ອງຍື່ນຄໍາຮ້ອງຂໍລົງທຶນໃໝ່.

**ປະທານສະພາແຫ່ງຊາດ**